ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 252 /ລບ

ນະຄອນຫຼວງວຽງຈັນ, ວັນທີ 26.05.2020.

# ດຳລັດ
# ວ່າດ້ວຍ ການປິດບໍ່ແຮ່

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 03 ພະຈິກ 2017;
- ອີງຕາມ ໜັງສືສະເໜີຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 0434/ພບ, ລົງວັນທີ 07 ເມສາ 2020.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານປິດບໍ່ແຮ່ ເພື່ອຮັບປະກັນ ໃຫ້ເນື້ອທີ່ ທີ່ໄດ້ຮັບຜົນກະທົບ ຈາກການດຳເນີນກິດຈະການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໄດ້ຮັບການປົວແປງ ແລະ ຟື້ນຟູ ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ ແນໃສ່ສ້າງຄວາມປອດໄພຕໍ່ຄົນ, ສັດ, ພືດ ແລະ ປົກປັກຮັກສາສິ່ງແວດລ້ອມ, ສາມາດນຳໃຊ້ເນື້ອທີ່ນັ້ນໃຫ້ມີຜົນປະໂຫຍດສູງສຸດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໃນເຂດພັດທະນາບໍ່ແຮ່ ດີຂຶ້ນ.

### ມາດຕາ 2 ການປິດບໍ່ແຮ່

ການປິດບໍ່ແຮ່ ແມ່ນ ຂະບວນການປົວແປງ, ຟື້ນຟູເນື້ອທີ່ດິນ ພາຍຫຼັງສິ້ນສຸດການຂຸດຄົ້ນ ເພື່ອຈະສົ່ງມອບເນື້ອທີ່ສຳປະທານໃຫ້ແກ່ລັດ.

ມາດຕາ 3 ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິ່ງແວດລ້ອມ** ໝາຍເຖິງ ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທໍາມະຊາດ;
2. **ຜູ້ລົງທຶນ** ໝາຍເຖິງ ນິຕິບຸກຄົນທີ່ໄດ້ຂຶ້ນທະບຽນຢ່າງຖືກຕ້ອງຕາມກົດໝາຍ ທີ່ເປັນຄູ່ສັນຍາສໍາປະທານພັດທະນາບໍ່ແຮ່ ລວມທັງຜູ້ຮັບໂອນສິດສໍາປະທານ;
3. **ສັນຍາສໍາປະທານພັດທະນາບໍ່ແຮ່** ໝາຍເຖິງ ສັນຍາທີ່ເຊັນໂດຍ ລັດຖະບານ ສປປ ລາວ ແລະ ບໍລິສັດ ທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນການຂຸດຄົ້ນແຮ່ທາດ;
4. **ຜູ້ມີສ່ວນໄດ້ສ່ວນເສຍ** ໝາຍເຖິງ ຜູ້ລົງທຶນ, ຊຸມຊົນ ທີ່ໄດ້ຮັບຜົນກະທົບ, ລັດ ແລະ ສາທາລະນະຊົນ ທີ່ມີສາຍພົວພັນກ່ຽວກັບສ່ວນໄດ້ຜົນປະໂຫຍດ ແລະ ເສຍຜົນປະໂຫຍດ ໃນໂຄງການຂຸດຄົ້ນບໍ່ແຮ່.

ມາດຕາ 4 ຫຼັກການກ່ຽວກັບວຽກງານປິດບໍ່ແຮ່

ວຽກງານປິດບໍ່ແຮ່ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນສະຖຽນລະພາບທາງກາຍະພາບ ແລະ ຄວາມປອດໄພ ຕໍ່ ຄົນ, ສັດ, ພືດ;
2. ຮັບປະກັນສະຖຽນລະພາບທາງເຄມີ;
3. ຮັບປະກັນການປ່ຽນແປງທາງດ້ານເສດຖະກິດ-ສັງຄົມ ຂອງຊຸມຊົນທີ່ໄດ້ຮັບຜົນກະທົບ ໃນທາງບວກ;
4. ຟື້ນຟູບູລະນະສິ່ງແວດລ້ອມຕາມແຜນການປິດບໍ່ແຮ່ສະບັບສຸດທ້າຍທີ່ໄດ້ຮັບຮອງ;
5. ຮັບປະກັນການມີສ່ວນຮ່ວມຂອງຊຸມຊົນ ທີ່ໄດ້ຮັບຜົນກະທົບໃນເຂດໂຄງການຕັ້ງຢູ່;
6. ສອດຄ່ອງກັບເປົ້າໝາຍການພັດທະນາຂອງລັດຖະບານ ແລະ ຂອງຊຸມຊົນທີ່ໄດ້ຮັບຜົນກະທົບ.

ມາດຕາ 5 ຂອບເຂດການນໍາໃຊ້

ດໍາລັດສະບັບນີ້ ນໍາໃຊ້ສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນທຸລະກິດກ່ຽວກັບແຮ່ທາດ ຢູ່ ສປປ ລາວ ລວມທັງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ແລະ ຊຸມຊົນໃນຂອບເຂດໂຄງການຕັ້ງຢູ່.

## ໝວດທີ 2
## ແຜນການປິດບໍ່ແຮ່

ມາດຕາ 6 ແຜນການປິດບໍ່ແຮ່

ແຜນການປິດບໍ່ແຮ່ ແມ່ນ ການກໍານົດບັນດາ ໜ້າວຽກທີ່ໄດ້ມີການຈັດລຽງ ແລະ ສັບຊ້ອນຕາມລໍາດັບຂັ້ນຕອນ, ກໍານົດເວລາ, ການຫຼຸດຜ່ອນຄວາມສ່ຽງ, ມູນຄ່າໃຊ້ຈ່າຍການປິດບໍ່ແຮ່ ເພື່ອບັນລຸເປົ້າໝາຍ ຂອງການ

ປັວແປງ, ຟື້ນຟູສິ່ງແວດລ້ອມທີ່ຖືກລົບກວນ ລວມທັງການຄຸ້ມຄອງ, ຕິດຕາມພາຍຫຼັງການປິດບໍ່ແຮ່ ເພື່ອເປັນຫຼັກການໃນການຈັດຕັ້ງປະຕິບັດວຽກງານປິດບໍ່ແຮ່.

ທຸກໂຄງການຂຸດຄົ້ນແຮ່ທາດ ຕ້ອງມີແຜນການປິດບໍ່ແຮ່ ຍົກເວັ້ນການຮ່ອນແຮ່ທາດໂລຫະແບບພື້ນເມືອງ.

### ມາດຕາ 7 ເນື້ອໃນຂອງແຜນການປິດບໍ່ແຮ່

ແຜນການປິດບໍ່ແຮ່ ປະກອບດ້ວຍເນື້ອໃນ ດັ່ງນີ້:

1. ຕາຕະລາງສາລະບານ ຊຶ່ງມີ ຮູບພາບ, ຕາຕະລາງ ແລະ ແຜນທີ່;
2. ຈຸດປະສົງ, ຂອບເຂດ ແລະ ແນວຄວາມຄິດການປິດບໍ່ແຮ່;
3. ສະພາບລວມຂອງໂຄງການ;
4. ລາຍລະອຽດກ່ຽວກັບວຽກງານປິດບໍ່ແຮ່ສໍາລັບແຕ່ລະອົງປະກອບ ແລະ ພັນທະອື່ນທີ່ຕິດພັນກັນ;
5. ການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ;
6. ການນໍາໃຊ້ທີ່ດິນຫຼັງການປິດບໍ່ແຮ່ ແລະ ເປົ້າໝາຍຂອງການປິດບໍ່ແຮ່;
7. ການພັດທະນາເປົ້າໝາຍເພື່ອບັນລຸຄວາມສໍາເລັດໂດຍສົມບູນ;
8. ການສະໜັບສະໜູນການສຶກສາ ແລະ ການສັງລວມການວິເຄາະຂໍ້ມູນຂອງການປິດບໍ່ແຮ່;
9. ການກໍານົດ ແລະ ການຄຸ້ມຄອງຄວາມສ່ຽງຂອງການປິດບໍ່ແຮ່;
10. ການຈັດຕັ້ງປະຕິບັດການປິດບໍ່ແຮ່;
11. ມາດຕະການຕິດຕາມພາຍຫຼັງການປິດບໍ່ແຮ່;
12. ການປະເມີນມູນຄ່າຂອງການປິດບໍ່ແຮ່.

ເນື້ອໃນຂອງແຜນການປິດບໍ່ແຮ່ ສໍາລັບໂຄງການຂຸດຄົ້ນແຮ່ທາດທີ່ອົງການປົກຄອງຂັ້ນແຂວງອະນຸຍາດ ອາດມີເນື້ອໃນທີ່ງ່າຍດາຍກວ່າໂຄງການທີ່ລັດຖະບານອະນຸຍາດ ຊຶ່ງກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ກໍານົດ.

### ມາດຕາ 8 ແຜນການປິດບໍ່ແຮ່ເບື້ອງຕົ້ນ

ຜູ້ລົງທຶນ ຕ້ອງໄດ້ສ້າງ ແລະ ສົ່ງມອບແຜນການປິດບໍ່ແຮ່ເບື້ອງຕົ້ນ ພ້ອມກັບບົດລາຍງານຜົນການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ພິຈາລະນາ.

### ມາດຕາ 9 ການຮັບຮອງເອົາແຜນການປິດບໍ່ແຮ່ເບື້ອງຕົ້ນ

ຂະແໜງການພະລັງງານ ແລະ ບໍ່ແຮ່ ຮັບຮອງເອົາແຜນການປິດບໍ່ແຮ່ເບື້ອງຕົ້ນ ພ້ອມກັບການຮັບຮອງເອົາບົດລາຍງານການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ພາຍໃນ ໜຶ່ງຮ້ອຍຊາວ ວັນ ນັບແຕ່ວັນໄດ້ຮັບແຜນການປິດບໍ່ແຮ່ເບື້ອງຕົ້ນ ຢ່າງຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ.

ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ກໍານົດວິທີການ, ເງື່ອນໄຂ ແລະ ຂັ້ນຕອນໃນການຮັບຮອງແຜນການປິດບໍ່ແຮ່ເບື້ອງຕົ້ນ.

**ມາດຕາ 10 ການທົບທວນແຜນການປິດບໍ່ແຮ່ເບື້ອງຕົ້ນ**

ຜູ້ລົງທຶນ ຕ້ອງທົບທວນຄືນແຜນການປິດບໍ່ແຮ່ເບື້ອງຕົ້ນ ທຸກໆ ສາມ ປີ ເພື່ອປັບປຸງໃຫ້ແທດເໝາະກັບສະພາບການ ແລ້ວສົ່ງໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ຄົ້ນຄວ້າ ແລະ ພິຈາລະນາ.

ພາຍຫຼັງໄດ້ຮັບແຜນການປິດບໍ່ແຮ່ສະບັບປັບປຸງ ຂະແໜງການພະລັງງານ ແລະ ບໍ່ແຮ່ ຕ້ອງເປັນເຈົ້າການ ປຶກສາຫາລື ຮ່ວມກັບຜູ້ລົງທຶນ, ຜູ້ມີສ່ວນໄດ້ສ່ວນເສຍ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບເນື້ອໃນທີ່ໄດ້ປັບປຸງມາແລ້ວ ດັ່ງນີ້:

1. ການອອກແບບແນວຄວາມຄິດການປິດບໍ່ແຮ່ຄືນ ຖ້າມີການປ່ຽນແປງ;
2. ຜົນກະທົບໄລຍະຍາວໃນການອອກແບບຄືນຂອງການປ່ວແປງ, ຟື້ນຟູສິ່ງແວດລ້ອມ;
3. ການປະເມີນຄືນກ່ຽວກັບເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມ ຖ້າຈຳເປັນ;
4. ການປ່ຽນແປງວິທີການຈັດຕັ້ງປະຕິບັດແຜນການປິດບໍ່ແຮ່ທີ່ໄດ້ຮັບຮອງ.

ໃນກໍລະນີການປັບປຸງແຜນການປິດບໍ່ແຮ່ ຫາກມີການປ່ຽນແປງເນື້ອໃນສຳຄັນຂອງແຜນການປິດບໍ່ແຮ່ເບື້ອງຕົ້ນ ຕ້ອງໄດ້ມີການເຈລະຈາຄືນໃໝ່.

**ມາດຕາ 11 ການຮັບຮອງແຜນການປິດບໍ່ແຮ່ສະບັບປັບປຸງ**

ຂະແໜງການພະລັງງານ ແລະ ບໍ່ແຮ່ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ພິຈາລະນາຮັບຮອງ ຫຼື ປະຕິເສດ ແຜນການປິດບໍ່ແຮ່ສະບັບປັບປຸງ ພາຍໃນ ຫົກສິບ ວັນ ນັບແຕ່ວັນໄດ້ຮັບແຜນການດັ່ງກ່າວ ເປັນຕົ້ນໄປ.

**ມາດຕາ 12 ແຜນການປິດບໍ່ແຮ່ສະບັບສຸດທ້າຍ**

ກ່ອນສິ້ນສຸດ ການຂຸດຄົ້ນ ແລະ/ຫຼື ການປຸງແຕ່ງແຮ່ທາດ ສອງ ປີ ຜູ້ລົງທຶນ ຕ້ອງສະເໜີເຈດຈຳນົງຢ່າງເປັນລາຍລັກອັກສອນ ເພື່ອຢຸດຕິການດຳເນີນການຂຸດຄົ້ນ ແລະ/ຫຼື ປຸງແຕ່ງ ແລະ ເລີ່ມທົບທວນຄືນ ກ່ຽວກັບແຜນການປິດບໍ່ແຮ່ສະບັບສຸດທ້າຍ. ຜູ້ລົງທຶນ ຕ້ອງກະກຽມແຜນການປິດບໍ່ແຮ່ສະບັບສຸດທ້າຍ ຊຶ່ງລວມເອົາ ມູນຄ່າໃຊ້ຈ່າຍສຸດທ້າຍ, ການຟື້ນຟູເນື້ອທີ່ ແລະ ການຄຸ້ມຄອງ, ຕິດຕາມພາຍຫຼັງການປິດບໍ່ແຮ່ ແລ້ວສົ່ງໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ເພື່ອພິຈາລະນາຮັບຮອງ.

ຜູ້ລົງທຶນ ຕ້ອງແຕ່ງຕັ້ງ ຜູ້ທີ່ມີຄວາມຊຳນານງານ ເປັນຜູ້ຈັດການການປິດບໍ່ແຮ່ ແລະ ສ້າງຕັ້ງທີມງານປິດບໍ່ແຮ່.

ຂະແໜງການພະລັງງານ ແລະ ບໍ່ແຮ່ ປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ ເພື່ອຕົກລົງກັບຜູ້ລົງທຶນ ກ່ຽວກັບການນຳໃຊ້ທີ່ດິນ, ການນຳໃຊ້ໂຄງລ່າງພື້ນຖານ, ອາຄານ ແລະ ອື່ນໆ.

ຜູ້ລົງທຶນ ອາດສະເໜີໂຈະເຈດຈຳນົງກ່ຽວກັບການຢຸດຕິການຂຸດຄົ້ນ ແລະ/ຫຼື ປຸງແຕ່ງແຮ່ທາດ ຖ້າຫາກວ່າ ຍັງມີປະລິມານສະສົມແຮ່ທາດຕື່ມອີກ ຊຶ່ງຕ້ອງດຳເນີນການຂໍອະນຸຍາດຕໍ່ອາຍຸການຂຸດຄົ້ນ ແລະ/ຫຼື ປຸງແຕ່ງຕື່ມ.

ມາດຕາ 13 ການຮັບຮອງແຜນການປິດບໍ່ແຮ່ສະບັບສຸດທ້າຍ

ຂະແໜງການພະລັງງານ ແລະ ບໍ່ແຮ່ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ພິຈາລະນາ ຮັບຮອງແຜນການປິດບໍ່ແຮ່ສະບັບສຸດທ້າຍ ພາຍໃນກຳນົດ ໜຶ່ງ ປີ ນັບແຕ່ວັນໄດ້ຮັບແຜນການດັ່ງກ່າວເປັນຕົ້ນໄປ.

ໃນກໍລະນີ ແຜນການປິດບໍ່ແຮ່ສະບັບສຸດທ້າຍ ຫາກບໍ່ສອດຄ່ອງຕາມການຕົກລົງໃນເວລາເຈລະຈາ ຂະແໜງການພະລັງງານ ແລະ ບໍ່ແຮ່ ຕ້ອງແຈ້ງໃຫ້ຜູ້ລົງທຶນ ເພື່ອປັບປຸງຄືນ ພາຍໃນກຳນົດເວລາ ສາມສິບ ວັນ ນັບແຕ່ວັນໄດ້ຮັບແຜນການດັ່ງກ່າວເປັນຕົ້ນໄປ.

## ໝວດທີ 3
## ການປິດບໍ່ແຮ່

ມາດຕາ 14 ການດຳເນີນການປິດບໍ່ແຮ່

ພາຍຫຼັງແຜນການປິດບໍ່ແຮ່ສະບັບສຸດທ້າຍຖືກຮັບຮອງ ຜູ້ລົງທຶນຕ້ອງດຳເນີນການປິດບໍ່ແຮ່ ຕາມ 2 ໄລຍະ ດັ່ງນີ້:

1. ໄລຍະ ຮື້ຖອນ, ປັບປຸງສະຖານທີ່ ແລະ ການໂອນຊັບສິນ ຊຶ່ງປະກອບມີ ການມ້າງ ຮື້ຖອນ ໂຄງລ່າງພື້ນຖານ ໃນເຂດບໍ່ແຮ່, ການປັບປຸງພື້ນທີ່ລະບາຍນໍ້າຄືນໃໝ່, ປັບປຸງບ່ອນລາດອຽງໃຫ້ໝັ້ນຄົງ, ການ ນຳເອົາດິນປູກຝັງມາຖົມຄືນ, ການໂອນຊັບສິນຂອງໂຄງການບໍ່ແຮ່, ການຍົກຍ້າຍແຮງງານ ແລະ ອື່ນໆ;
2. ໄລຍະ ຟື້ນຟູ, ປູກ ຕົ້ນໄມ້ ແລະ ພືດໃສ່ຄືນ ເພື່ອໃຫ້ສອດຄ່ອງຕາມການຕົກລົງເຫັນດີນຳກັນກ່ຽວກັບການນຳໃຊ້ ທີ່ດິນ ສຳລັບແຕ່ລະເຂດ.

ມາດຕາ 15 ການຟື້ນຟູທາງ ກາຍະພາບ ແລະ ເຄມີ

ການຟື້ນຟູທາງ ກາຍະພາບ ແລະ ເຄມີໃນເຂດບໍ່ແຮ່ ມີດັ່ງນີ້:

1. ສະຖຽນລະພາບທາງກາຍະພາບ: ຜູ້ລົງທຶນ ຕ້ອງດຳເນີນການປັວແປງພື້ນທີ່ເຂດບໍ່ແຮ່ຕາມແຜນການປິດບໍ່ແຮ່ທີ່ຖືກຮັບຮອງ ເປັນຕົ້ນ ການຖົມ, ການປັບໜ້າດິນຄືນ, ການຄວບຄຸມການເຊາະເຈື່ອນເພື່ອບໍ່ໃຫ້ມີການຍຸບຕົວຂອງພື້ນທີ່, ການເຊາະເຈື່ອນຂອງໜ້າດິນ ແລະ ນຳໃຊ້ມາດຕະການຮັກສາຄວາມປອດໄພ ຢູ່ໃນເຂດບໍ່ແຮ່ ເພື່ອປ້ອງກັນບໍ່ໃຫ້ບຸກຄົນ ຫຼື ສັດ ໄດ້ຮັບຜົນກະທົບ ຈາກການປິດບໍ່ແຮ່ ແລະ ຮັບປະກັນຄວາມປອດໄພຂອງຊຸມຊົນທີ່ຢູ່ອ້ອມຂ້າງ ແລະ ການນຳໃຊ້ພື້ນທີ່;
2. ສະຖຽນລະພາບທາງເຄມີ: ຜູ້ລົງທຶນ ຕ້ອງດຳເນີນການບຳບັດ ແລະ ເຮັດໃຫ້ສານເຄມີ ມີຄ່າເປັນກາງ ຕາມວິທີການທີ່ກຳນົດໄວ້ໃນແຜນການປິດບໍ່ແຮ່ສະບັບສຸດທ້າຍທີ່ຖືກຮັບຮອງ ພ້ອມທັງສ້າງຫຼັກການ ແລະ ລະບຽບການໃນການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ເພື່ອບໍ່ໃຫ້ສານເຄມີສົ່ງຜົນກະທົບຕໍ່ສິ່ງແວດລ້ອມອ້ອມຂ້າງ.

ມາດຕາ 16 ການບູລະນະຟື້ນຟູສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ

ພາຍຫຼັງຟື້ນຟູທາງກາຍະພາບ ແລະ ເຄມີສຳເລັດແລ້ວ ຜູ້ລົງທຶນ ຕ້ອງດຳເນີນການບູລະນະຟື້ນຟູສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ດັ່ງນີ້:

1. ສ້າງຄວາມເຂັ້ມແຂງໃຫ້ກັບເສດຖະກິດ-ສັງຄົມ ຂອງຊຸມຊົນໃຫ້ສາມາດກຸ້ມຕົນເອງ ຫຼັງຈາກການປິດບໍ່ແຮ່ ດ້ວຍການເຜີຍແຜ່ຄວາມຮູ້, ຈັດຝຶກອົບຮົມເພື່ອສ້າງ ແລະ ພັດທະນາສີມືແຮງງານ ນອກນີ້ອາດຈະສ້າງເງື່ອນໄຂອຳນວຍຄວາມສະດວກໃນການປະກອບອາຊີບຂອງຊຸມຊົນຕາມສະພາບຄວາມເປັນຈິງ;
2. ເຮັດໃຫ້ລະບົບນິເວດທີ່ຖືກທຳລາຍມີການຟື້ນຕົວ ດ້ວຍຕົວມັນເອງ ແລະ ໄດ້ຮັບການປົວແປງໃຫ້ຢູ່ໃນສະພາບດີຂຶ້ນ ໃກ້ຄຽງກັບສະພາບກ່ອນການຂຸດຄົ້ນ ແລະ ຟື້ນຟູທີ່ດິນພາຍຫຼັງການປິດບໍ່ແຮ່ໃຫ້ສາມາດນຳໃຊ້ເຂົ້າໃນສາຂາລະນະປະໂຫຍດອື່ນໄດ້ ຢ່າງຍືນຍົງ.

ມາດຕາ 17 ການຕິດຕາມກວດກາຂະບວນການປິດບໍ່ແຮ່

ການຕິດຕາມກວດກາຂະບວນການປິດບໍ່ແຮ່ ແມ່ນການກວດກາການຈັດຕັ້ງປະຕິບັດວຽກງານປິດບໍ່ແຮ່ຂອງຜູ້ລົງທຶນ ໃນການຮື້ຖອນ, ປັບປຸງສະຖານທີ່, ການໂອນຊັບສິນ ແລະ ການຟື້ນຟູເນື້ອທີ່ຄືນ ເພື່ອຮັບປະກັນວ່າ ເນື້ອທີ່ທີ່ໄດ້ຮັບຜົນກະທົບ ໄດ້ຮັບການປົວແປງ ແລະ ຟື້ນຟູຕາມເປົ້າໝາຍ ທີ່ກຳນົດໄວ້ໃນແຜນການປິດບໍ່ແຮ່ສະບັບສຸດທ້າຍ.

ຄະນະກຳມະການປິດບໍ່ແຮ່ ມີໜ້າທີ່ຕິດຕາມກວດກາການປິດບໍ່ແຮ່ ແລະ ລາຍງານຄວາມຄືບໜ້າ ຂອງການປິດບໍ່ແຮ່ ແລະ ການຟື້ນຟູເນື້ອທີ່ດິນຄືນ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

ຂະແໜງການພະລັງງານ ແລະ ບໍ່ແຮ່ ສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ດຳເນີນການຕິດຕາມກວດກາສະພາບການປິດບໍ່ແຮ່ໃນແຕ່ລະປີ ນັບແຕ່ອັນຢຸດຕິການຜະລິດເປັນຕົ້ນໄປ ເພື່ອຮັບປະກັນໃຫ້ແຜນການປິດບໍ່ແຮ່ສະບັບສຸດທ້າຍທີ່ຖືກຮັບຮອງ ໄດ້ຮັບການຈັດຕັ້ງປະຕິບັດ.

ຂະແໜງການພະລັງງານ ແລະ ບໍ່ແຮ່ ສົມທົບກັບ ຜູ້ລົງທຶນ ຕິດຕາມກວດກາ ຄວາມຄືບໜ້າຂອງການຟື້ນຟູເນື້ອທີ່ຄືນເພື່ອກຳນົດອັດຕາສ່ວນຂອງການສຳເລັດວຽກງານປິດບໍ່ແຮ່ ທີ່ໄດ້ຖືກຈັດຕັ້ງປະຕິບັດແລ້ວ.

ມາດຕາ 18 ການຕິດຕາມພາຍຫຼັງການປິດບໍ່ແຮ່

ການຕິດຕາມພາຍຫຼັງການປິດບໍ່ແຮ່ ແມ່ນການກວດກາຂອງຜູ້ມີສ່ວນໄດ້ສ່ວນເສຍ ກ່ຽວກັບການບຳບັດສິ່ງເສດເຫຼືອຈາກການຂຸດຄົ້ນ ແລະ ອ່າງເກັບຫາງແຮ່, ເນື້ອທີ່ ທີ່ຖືກລົບກວນ ພາຍຫຼັງໄດ້ຮັບການປົວແປງຟື້ນຟູ ລວມທັງການບຳບັດ ນ້ຳໜ້າດິນ ແລະ ນ້ຳໃຕ້ດິນ. ໄລຍະເວລາການຕິດຕາມ ພາຍຫຼັງການປິດບໍ່ແຮ່ ແມ່ນສອງ ປີ ຫຼື ຫຼາຍກວ່ານັ້ນ ໂດຍອີງໃສ່ຜົນຄວາມຄືບໜ້າໃນການບັນລຸເງື່ອນໄຂການສຳເລັດສົມບູນຕາມທີ່ໄດ້ກຳນົດໃນແຜນການປິດບໍ່ແຮ່ສະບັບສຸດທ້າຍ, ການປະເມີນຄວາມສ່ຽງ ກ່ຽວກັບຄວາມປອດໄພ, ສຸຂະພາບ ຂອງຊຸມຊົນ ແລະ ສິ່ງແວດລ້ອມ ອ້ອມຂ້າງເຂດໂຄງການ.

### ມາດຕາ 19 ການປະເມີນການປິດບໍ່ແຮ່

ຂະແໜງການພະລັງງານ ແລະ ບໍ່ແຮ່ ຕ້ອງດຳເນີນການກວດກາ ເພື່ອປະເມີນການປະຕິບັດການປິດບໍ່ແຮ່ ແລະ ການຟື້ນຟູເນື້ອທີ່ຄືນ ໂດຍອີງໃສ່ແຜນການປິດບໍ່ແຮ່ສະບັບສຸດທ້າຍທີ່ໄດ້ຮັບຮອງ.

ໃນກໍລະນີ ການປະເມີນຫາກເຫັນວ່າ ທຸກເງື່ອນໄຂໄດ້ຮັບການປະຕິບັດສຳເລັດ ຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ, ຂະແໜງການພະລັງງານ ແລະ ບໍ່ແຮ່ ຕ້ອງປຶກສາຫາລືຮ່ວມກັບຄະນະກຳມະການປິດບໍ່ແຮ່ ກ່ຽວກັບການສຳເລັດການປິດບໍ່ແຮ່ ແລະ ການສົ່ງເນື້ອທີ່ຄືນ.

ໃນກໍລະນີ ການປະເມີນຫາກເຫັນວ່າ ບໍ່ປະຕິບັດສຳເລັດໄດ້ຕາມເງື່ອນໄຂຕາມແຜນການປິດບໍ່ແຮ່ສະບັບສຸດທ້າຍ ແລະ ຜູ້ລົງທຶນ ກໍບໍ່ເຫັນດີຕໍ່ການປະເມີນດັ່ງກ່າວ ຂະແໜງການພະລັງງານ ແລະ ບໍ່ແຮ່ ອາດສະເໜີໃຫ້ມີການປະເມີນໂດຍຜູ້ຊ່ຽວຊານເອກະລາດ.

### ມາດຕາ 20 ການປະເມີນໂດຍຜູ້ຊ່ຽວຊານເອກະລາດ

ໃນກໍລະນີທີ່ມີການປະເມີນໂດຍຜູ້ຊ່ຽວຊານເອກະລາດ, ຂະແໜງການພະລັງງານ ແລະ ບໍ່ແຮ່ ແລະ ຜູ້ລົງທຶນ ຕ້ອງຕົກລົງກັນກ່ຽວກັບການເລືອກເອົາຜູ້ຊ່ຽວຊານເອກະລາດ. ຄ່າໃຊ້ຈ່າຍຂອງຜູ້ຊ່ຽວຊານເອກະລາດແມ່ນຄວາມຮັບຜິດຊອບຂອງຜູ້ລົງທຶນ.

ໃນກໍລະນີ ການປະເມີນຂອງຜູ້ຊ່ຽວຊານເອກະລາດ ຫາກເຫັນວ່າ ຜູ້ລົງທຶນ ຍັງບໍ່ປະຕິບັດສຳເລັດບາງເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນແຜນການປິດບໍ່ແຮ່ສະບັບສຸດທ້າຍ, ຜູ້ລົງທຶນ ຕ້ອງໄດ້ດຳເນີນວຽກງານເພີ່ມເຕີມ ເພື່ອໃຫ້ສຳເລັດຕາມເປົ້າໝາຍທີ່ໄດ້ຕົກລົງກັນ.

ໃນກໍລະນີ ການປະເມີນຂອງຜູ້ຊ່ຽວຊານເອກະລາດ ຫາກເຫັນວ່າຜູ້ລົງທຶນ ປະຕິບັດສຳເລັດທຸກເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນແຜນການປິດບໍ່ແຮ່ສະບັບສຸດທ້າຍ, ຂະແໜງການພະລັງງານ ແລະ ບໍ່ແຮ່ ຕ້ອງຍອມຮັບເອົາການປະເມີນຂອງຊ່ຽວຊານເອກະລາດ.

### ມາດຕາ 21 ການອອກໃບຢັ້ງຢືນການປິດບໍ່ແຮ່ ແລະ ການສົ່ງມອບເນື້ອທີ່ສຳປະທານຄືນ

ໃນກໍລະນີ ຜູ້ລົງທຶນໄດ້ປະຕິບັດການປິດບໍ່ແຮ່ສຳເລັດຕາມມາດຕາ 19 ຫຼື ມາດຕາ 20 ຂອງດຳລັດສະບັບນີ້, ຂະແໜງການພະລັງງານ ແລະ ບໍ່ແຮ່ ຕ້ອງອອກໃບຢັ້ງຢືນການປິດບໍ່ແຮ່ ແລະ ການສົ່ງມອບເນື້ອທີ່ສຳປະທານຄືນ ພ້ອມທັງຍົກເລີກໃບອະນຸຍາດຂຸດຄົ້ນບໍ່ແຮ່ ໃນກໍລະນີມີສະໜາມຂຸດຄົ້ນບໍ່ແຮ່ດຽວ ຫຼື ປ່ຽນແປງໃບອະນຸຍາດຂຸດຄົ້ນບໍ່ແຮ່ ໃນກໍລະນີມີສະໜາມຂຸດຄົ້ນບໍ່ແຮ່ຫຼາຍບ່ອນ.

ພາຍຫຼັງຍົກເລີກ ຫຼື ປ່ຽນແປງໃບອະນຸຍາດຂຸດຄົ້ນແລ້ວ ຂະແໜງການພະລັງງານ ແລະ ບໍ່ແຮ່ ຕ້ອງສະເໜີຂະແໜງການແຜນການ ແລະ ການລົງທຶນ ເພື່ອຍົກເລີກ ຫຼື ປ່ຽນແປງສັນຍາສຳປະທານພັດທະນາບໍ່ແຮ່ ແລະ ຜູ້ລົງທຶນຈະສິ້ນສຸດພັນທະ ຫຼື ມີພັນທະຕາມສັນຍາສຳປະທານພັດທະນາບໍ່ແຮ່ສະບັບປ່ຽນແປງ.

ຂະແໜງການພະລັງງານ ແລະ ບໍ່ແຮ່ ຕ້ອງແຈ້ງເຖິງ ທະນາຄານທີ່ຝາກເງິນຄ້ຳປະກັນ ຫຼື ທະນາຄານທີ່ຄ້ຳປະກັນການປິດບໍ່ແຮ່ ກ່ຽວກັບການປະຕິບັດສຳເລັດການປິດບໍ່ແຮ່ ເພື່ອຖອນເງິນຄ້ຳປະກັນທີ່ຍັງເຫຼືອ ຫຼື ສິ້ນສຸດພັນທະຄ້ຳປະກັນ.

ມາດຕາ 22 ການປິດບໍ່ແຮ່ກ່ອນກຳນົດ

ໃນກໍລະນີ ໂຈະການເຄື່ອນໄຫວຊົ່ວຄາວ ຂອງຜູ້ໄດ້ຮັບອະນຸຍາດຂຸດຄົ້ນ ຍ້ອນເຫດສຸດວິໄສ ຕາມທີ່ກຳນົດໄວ້ໃນມາດຕາ 101 ຂໍ້ 5 ຂອງກົດໝາຍວ່າດ້ວຍແຮ່ທາດ ແລະ ຜູ້ລົງທຶນ ບໍ່ສາມາດແກ້ໄຂ ຫຼື ບໍ່ສາມາດເຄື່ອນໄຫວຕໍ່ໄປໄດ້ ໃຫ້ສະເໜີຕໍ່ຂະແໜງການພະລັງງານ ແລະ ບໍ່ແຮ່ ເພື່ອຂໍປິດບໍ່ແຮ່ກ່ອນກຳນົດ ແລະ ເລີ່ມຕົ້ນການທົບທວນຄືນແຜນການປິດບໍ່ແຮ່ສະບັບສຸດທ້າຍ.

## ໝວດທີ 4
## ການຄ້ຳປະກັນການປິດບໍ່ແຮ່

ມາດຕາ 23 ການຄ້ຳປະກັນການປິດບໍ່ແຮ່

ການຄ້ຳປະກັນການປິດບໍ່ແຮ່ ແມ່ນ ເຄື່ອງມືທາງດ້ານການເງິນເພື່ອຮັບປະກັນໃຫ້ມີທຶນພຽງພໍນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານການປິດບໍ່ແຮ່ໃຫ້ມີປະສິດທິຜົນ.

ຮູບການຄ້ຳປະກັນການປິດບໍ່ແຮ່ ມີດັ່ງນີ້:

1. ການຄ້ຳປະກັນດ້ວຍເງິນສົດ;
2. ການຄ້ຳປະກັນດ້ວຍໜັງສືສິນເຊື່ອ;
3. ເຄື່ອງມືທາງດ້ານການເງິນອື່ນ.

ມູນຄ່າການຄ້ຳປະກັນການປິດບໍ່ແຮ່ ແມ່ນຂຶ້ນກັບການປະເມີນມູນຄ່າຕາມທີ່ກຳນົດໄວ້ໃນແຜນການປິດບໍ່ແຮ່ທີ່ຖືກຮັບຮອງ.

ມາດຕາ 24 ການຄ້ຳປະກັນການປິດບໍ່ແຮ່ດ້ວຍເງິນສົດ

ການຄ້ຳປະກັນການປິດບໍ່ແຮ່ດ້ວຍເງິນສົດ ຕ້ອງມີສັນຍາຮ່ວມກັນ ລະຫວ່າງ ຂະແໜງການພະລັງງານ ແລະ ບໍ່ແຮ່, ຜູ້ລົງທຶນ ແລະ ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ. ຫຼັງຈາກນັ້ນ ໃຫ້ເປີດບັນຊີຮ່ວມລະຫວ່າງຂະແໜງການພະລັງງານ ແລະ ບໍ່ແຮ່ ແລະ ຜູ້ລົງທຶນ ຢູ່ໃນທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນໃດໜຶ່ງ ຢູ່ ສປປ ລາວ ເພື່ອວາງເງິນຄ້ຳປະກັນ ຕາມອັດຕາສ່ວນທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍແຮ່ທາດ.

ໃນກໍລະນີ ຜູ້ລົງທຶນ ບໍ່ດຳເນີນການປິດບໍ່ແຮ່ ຫຼື ບໍ່ປະຕິບັດຕາມແຜນການປິດບໍ່ແຮ່ສະບັບສຸດທ້າຍທີ່ໄດ້ຮັບຮອງ, ຂະແໜງການພະລັງງານ ແລະ ບໍ່ແຮ່ ມີສິດຮິບເງິນຄ້ຳປະກັນການປິດບໍ່ແຮ່.

ມາດຕາ 25 ການຄ້ຳປະກັນດ້ວຍໜັງສືສິນເຊື່ອ

ຜູ້ລົງທຶນ ສາມາດຊື້ໜັງສືສິນເຊື່ອຄ້ຳປະກັນ ນຳທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ ຢູ່ ສປປ ລາວ ບົນພື້ນຖານການເຫັນດີຂອງຂະແໜງການພະລັງງານ ແລະ ບໍ່ແຮ່ ເພື່ອຮັບປະກັນການມີທຶນພຽງພໍນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດການປິດບໍ່ແຮ່ໃຫ້ມີປະສິດທິຜົນ. ຫຼັງຈາກນັ້ນຕ້ອງເຮັດສັນຍາຮ່ວມ ລະຫວ່າງ ຂະແໜງການພະລັງງານ ແລະ ບໍ່ແຮ່, ຜູ້ລົງທຶນ ແລະ ທະນາຄານທຸລະກິດ ຫຼື ສະຖາບັນການເງິນອື່ນ.

ໃນກໍລະນີ ຜູ້ລົງທຶນ ບໍ່ດຳເນີນການປິດບໍ່ແຮ່ ຫຼື ບໍ່ປະຕິບັດຕາມແຜນການປິດບໍ່ແຮ່ສະບັບສຸດທ້າຍທີ່ໄດ້ຮັບຮອງ ທະນາຄານທຸລະກິດ ຫຼື ສະຖາບັນການເງິນທີ່ຄໍ້າປະກັນ ຈະມີຄວາມຮັບຜິດຊອບສະໜອງທຶນໃນການຈັດຕັ້ງປະຕິບັດການປິດບໍ່ແຮ່ຕາມວົງເງິນທີ່ໄດ້ຄໍ້າປະກັນ.

ຜູ້ລົງທຶນ ຕ້ອງຕໍ່ອາຍຸຂອງໜັງສືສິນເຊື່ອຄໍ້າປະກັນກ່ອນໝົດອາຍຸ ສີ່ສິບ ວັນ, ຖ້າຫາກຜູ້ລົງທຶນ ບໍ່ຂໍຕໍ່ອາຍຸໜັງສືສິນເຊື່ອກ່ອນຮອດກຳນົດດັ່ງກ່າວ ຂະແໜງການພະລັງງານ ແລະ ບໍ່ແຮ່ ສາມາດນຳເອົາໜັງສືສິນເຊື່ອດັ່ງກ່າວ ໄປຖອນເງິນນຳທະນາຄານທຸລະກິດ ຫຼື ສະຖາບັນການເງິນນັ້ນ ເພື່ອນຳໃຊ້ເຂົ້າໃນການປິດບໍ່ແຮ່.

ໃນກໍລະນີ ທີ່ທະນາຄານ ບໍ່ຕໍ່ອາຍຸໜັງສືສິນເຊື່ອ ຜູ້ລົງທຶນ ຕ້ອງໃຊ້ຮູບການຄໍ້າປະກັນອື່ນ ກ່ອນຮອດກຳນົດຕໍ່ອາຍຸຂອງໜັງສືສິນເຊື່ອ.

### ມາດຕາ 26 ການທົບທວນມູນຄ່າການຄໍ້າປະກັນການປິດບໍ່ແຮ່

ໃນໄລຍະທົບທວນແຜນການປິດບໍ່ແຮ່ແຕ່ລະຄັ້ງ ຜູ້ລົງທຶນ ຕ້ອງທົບທວນ ແລະ ປັບປຸງ ການປະເມີນມູນຄ່າການປິດບໍ່ແຮ່ ແລະ ລວມທັງການປ່ຽນແປງໃດໜຶ່ງໃນແຜນປະຕິບັດງານ. ໃນກໍລະນີ ຫາກການທົບທວນມູນຄ່າຄາດຄະເນຂອງການປິດບໍ່ແຮ່ເພີ່ມຂຶ້ນ ຜູ້ລົງທຶນ ຕ້ອງໄດ້ວາງເງິນຄໍ້າປະກັນເພີ່ມເຕີມໃຫ້ພຽງພໍ.

### ມາດຕາ 27 ການຖອນເງິນຄໍ້າປະກັນການປິດບໍ່ແຮ່

ພາຍຫຼັງການຮັບຮອງເອົາແຜນການປິດບໍ່ແຮ່ສະບັບສຸດທ້າຍ ຜູ້ລົງທຶນ ສາມາດຖອນເງິນຄໍ້າປະກັນການປິດບໍ່ແຮ່ໄດ້ ບົນພື້ນຖານຂອງວຽກຕົວຈິງທີ່ໄດ້ເຮັດສຳເລັດ ໃນແຕ່ລະປີ. ຂະແໜງການພະລັງງານ ແລະ ບໍ່ແຮ່ ສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກວດກາໜ້າວຽກດັ່ງກ່າວທີ່ໄດ້ຖືກປະຕິບັດ ແລະ ຮັບຮອງການຖອນເງິນຂອງແຕ່ລະໜ້າວຽກຂອງແຜນການປິດບໍ່ແຮ່ສະບັບສຸດທ້າຍ.

### ມາດຕາ 28 ເປົ້າໝາຍການນຳໃຊ້ເງິນຄໍ້າປະກັນການປິດບໍ່ແຮ່

ເງິນຄໍ້າປະກັນການປິດບໍ່ແຮ່ ຈະຖືກນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການດຳເນີນການປິດບໍ່ແຮ່;
2. ການປົວແປງພື້ນທີ່ເຂດບໍ່ແຮ່;
3. ການບູລະນະຟື້ນຟູສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;
4. ການຕິດຕາມພາຍຫຼັງການປິດບໍ່ແຮ່;
5. ການປະເມີນການປິດບໍ່ແຮ່.

## ໝວດທີ 5
## ຜູ້ທີ່ມີຄວາມຊຳນານງານ ແລະ ຜູ້ຊ່ຽວຊານເອກະລາດ

### ມາດຕາ 29 ຜູ້ທີ່ມີຄວາມຊຳນານງານ

ຜູ້ທີ່ມີຄວາມຊຳນານງານ ແມ່ນບຸກຄົນທີ່ມີເງື່ອນໄຂ ແລະ ມາດຕະຖານຕາມທີ່ກຳນົດໄວ້ໃນມາດຕາ 30 ຂອງດຳລັດສະບັບນີ້ ແລະ ໄດ້ຂຶ້ນທະບຽນນຳກະຊວງພະລັງງານ ແລະ ບໍ່ແຮ່.

##### ມາດຕາ 30 ເງື່ອນໄຂ ແລະ ມາດຕະຖານຂອງຜູ້ທີ່ມີຄວາມຊຳນານງານ

ຜູ້ທີ່ມີຄວາມຊຳນານງານ ຕ້ອງມີເງື່ອນໄຂ ແລະ ມາດຕະຖານ ດັ່ງນີ້:

1. ຕ້ອງມີປະກາສະນີຍະບັດ ລະດັບປະລິນຍາຕີ ກ່ຽວກັບແຮ່ທາດ ຫຼື ສິ່ງແວດລ້ອມ ຂຶ້ນໄປ;
2. ຕ້ອງມີປະສົບການກ່ຽວກັບວຽກງານບໍ່ແຮ່ ສິບ ປີ ຂຶ້ນໄປ;
3. ມີການຮັບຮອງຈາກອົງການທີ່ກ່ຽວຂ້ອງ ຂອງຕ່າງປະເທດ ຫຼື ສາກົນ ສຳລັບຄົນຕ່າງປະເທດ;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະຫຼະພາບ ຍ້ອນການກະທຳຜິດທີ່ພົວພັນກັບວິຊາຊີບຂອງຕົນໂດຍເຈດຕະນາ;
5. ມີຈັນຍາບັນ ຕໍ່ວຽກວິຊາສະເພາະ ແລະ ບໍລິສຸດສັດຊື່;
6. ບໍ່ເປັນພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ທີ່ຍັງປະຕິບັດໜ້າທີ່ຢູ່;
7. ມີສຸຂະພາບດີ.

##### ມາດຕາ 31 ການສ້າງບັນຊີລາຍຊື່ຜູ້ທີ່ມີຄວາມຊຳນານງານ

ກະຊວງພະລັງງານ ແລະ ບໍ່ແຮ່ ສ້າງບັນຊີລາຍຊື່ຜູ້ທີ່ມີຄວາມຊຳນານງານ ທີ່ໄດ້ຂຶ້ນທະບຽນແລ້ວ ເພື່ອເປັນບ່ອນອີງໃຫ້ແກ່ຜູ້ລົງທຶນໃນການໃຊ້ບໍລິການ.

##### ມາດຕາ 32 ສິດ ແລະ ພັນທະຂອງຜູ້ທີ່ມີຄວາມຊຳນານງານ

ຜູ້ທີ່ມີຄວາມຊຳນານງານ ມີສິດ ແລະ ພັນທະ ດັ່ງນີ້:

1. ໃຫ້ບໍລິການກ່ຽວກັບວຽກງານປິດບໍ່ແຮ່;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ແຜນການປິດບໍ່ແຮ່ຂອງໂຄງການ;
3. ຈັດຕັ້ງປະຕິບັດແຜນການປິດບໍ່ແຮ່ທີ່ຖືກຮັບຮອງ;
4. ລາຍງານຜົນຂອງການປະຕິບັດໜ້າທີ່ຂອງຕົນ ຢ່າງເປັນລາຍລັກອັກສອນໃຫ້ຜູ້ລົງທຶນ;
5. ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ເຂົ້າຮ່ວມການກວດກາພາກສະໜາມ ຢູ່ເຂດໂຄງການລົງທຶນ ແລະ ກິດຈະການຕ່າງໆຂອງວຽກງານປິດບໍ່ແຮ່;
6. ຮັບຜິດຊອບ ຕໍ່ຜົນຂອງການປະຕິບັດໜ້າທີ່ຂອງຕົນ;
7. ປະຕິບັດໜ້າທີ່ດ້ວຍຄວາມຍຸຕິທຳ, ວ່ອງໄວ ແລະ ໂປ່ງໃສ;
8. ຮັກສາຄວາມລັບກ່ຽວກັບການປະຕິບັດໜ້າທີ່ຂອງຕົນ ຍົກເວັ້ນຂໍ້ມູນທີ່ຕ້ອງສະໜອງໃຫ້ພາກສ່ວນອື່ນ ຕາມກົດໝາຍ;
9. ໄດ້ຮັບຄ່າແຮງງານ ຕາມການຕົກລົງ;
10. ເສຍພັນທະໃຫ້ລັດ ຕາມກົດໝາຍ;
11. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ສັນຍາບໍລິການ.

ມາດຕາ 33 ຜູ້ຊ່ຽວຊານເອກະລາດ

ຜູ້ຊ່ຽວຊານເອກະລາດ ແມ່ນ ບຸກຄົນທີ່ມີຄຸນວຸດທິສະເພາະດ້ານ ທີ່ຕິດພັນກັບວຽກງານປິດບໍ່ແຮ່ ແລະ ມີເງື່ອນໄຂ ແລະ ມາດຕະຖານອື່ນ ຕາມທີ່ກຳນົດໄວ້ໃນມາດຕາ 34 ຂອງດຳລັດສະບັບນີ້.

ມາດຕາ 34 ເງື່ອນໄຂ ແລະ ມາດຕະຖານຂອງຜູ້ຊ່ຽວຊານເອກະລາດ

ຜູ້ຊ່ຽວຊານເອກະລາດ ຕ້ອງມີເງື່ອນໄຂ ແລະ ມາດຕະຖານ ດັ່ງນີ້:

1. ມີຄວາມຮູ້, ຄວາມສາມາດ ທາງດ້ານວິຊາສະເພາະໃດໜຶ່ງທີ່ຕິດພັນກັບວຽກງານປິດບໍ່ແຮ່ ໂດຍມີໃບຢັ້ງຢືນຢ່າງຖືກຕ້ອງ;
2. ມີປະສົບການໃນການປິດບໍ່ແຮ່;
3. ມີການຮັບຮອງຈາກອົງການທີ່ກ່ຽວຂ້ອງ ຂອງຕ່າງປະເທດ ຫຼື ສາກົນ ສຳລັບຄົນຕ່າງປະເທດ;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະຫຼະພາບ ຍ້ອນການກະທຳຜິດທີ່ພົວພັນກັບວິຊາຊີບຂອງຕົນ ໂດຍເຈດຕະນາ;
5. ມີຈັນຍາບັນ, ຈັນຍາທຳ ແລະ ບໍລິສຸດສັດຊື່;
6. ມີສຸຂະພາບດີ.

ມາດຕາ 35 ບັນຊີສັງລວມຜູ້ຊ່ຽວຊານເອກະລາດ

ກະຊວງພະລັງງານ ແລະ ບໍ່ແຮ່ ສ້າງບັນຊີສັງລວມລາຍຊື່ຜູ້ຊ່ຽວຊານເອກະລາດ ລວມທັງຊີວະປະຫວັດຫຍໍ້ຂອງຜູ້ກ່ຽວ ເພື່ອເປັນບ່ອນອີງໃຫ້ແກ່ການເລືອກນຳໃຊ້ຜູ້ຊ່ຽວຊານເອກະລາດ.

ມາດຕາ 36 ສິດ ແລະ ພັນທະຂອງຜູ້ຊ່ຽວຊານເອກະລາດ

ຜູ້ຊ່ຽວຊານເອກະລາດ ມີສິດ ແລະ ພັນທະ ດັ່ງນີ້:

1. ຄົ້ນຄວ້າ ແລະ ປະກອບຄຳເຫັນ ຕໍ່ບົດລາຍງານການປິດບໍ່ແຮ່ຂອງໂຄງການ;
2. ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ເຂົ້າຮ່ວມການກວດກາພາກສະໜາມ ຢູ່ເຂດໂຄງການລົງທຶນ ແລະ ກິດຈະການຕ່າງໆ ຂອງວຽກງານປິດບໍ່ແຮ່;
3. ລາຍງານຜົນການກວດກາພາກສະໜາມ ແລະ ຜົນຂອງການປະເມີນຢ່າງເປັນລາຍລັກອັກສອນໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່, ຄະນະກຳມະການປິດບໍ່ແຮ່ ແລະ ຜູ້ລົງທຶນ;
4. ມີຄວາມເປັນເອກະລາດໃນການປະເມີນການປິດບໍ່ແຮ່;
5. ຮັບຜິດຊອບ ຕໍ່ທຸກຄຳເຫັນຂອງຕົນ;
6. ປະຕິບັດໜ້າທີ່ດ້ວຍຄວາມຍຸຕິທຳ, ວ່ອງໄວ ແລະ ໂປ່ງໃສ;

7. ຮັກສາຄວາມລັບຂອງການປະເມີນວຽກງານປິດບໍ່ແຮ່ ຍົກເວັ້ນຂໍ້ມູນທີ່ຕ້ອງສະໜອງໃຫ້ພາກສ່ວນອື່ນ ຕາມກົດໝາຍ;
8. ໄດ້ຮັບຄ່າແຮງງານ ຕາມການຕົກລົງ;
9. ເສຍພັນທະໃຫ້ລັດ ຕາມກົດໝາຍ;
10. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ສັນຍາບໍລິການ.

## ໝວດທີ 6
## ຄະນະກຳມະການປິດບໍ່ແຮ່

### ມາດຕາ 37 ຄະນະກຳມະການປິດບໍ່ແຮ່

ຄະນະກຳມະການປິດບໍ່ແຮ່ ແມ່ນ ການຈັດຕັ້ງທີ່ບໍ່ປະຈຳການ, ມີພາລະບົດບາດເປັນເສນາທິການໃນການຄົ້ນຄວ້າ, ຊີ້ນຳ ແລະ ປະສານງານກັບບັນດາ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອພັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານປິດບໍ່ແຮ່.

ຄະນະກຳມະການປິດບໍ່ແຮ່ ປະກອບມີ ຄະນະກຳມະການປິດບໍ່ແຮ່ສຳລັບທຸລະກິດກ່ຽວກັບບໍ່ແຮ່ ແລະ ຄະນະກຳມະການປິດບໍ່ແຮ່ສຳລັບທຸລະກິດກ່ຽວກັບແຮ່ທາດສະເພາະ.

### ມາດຕາ 38 ຄະນະກຳມະການປິດບໍ່ແຮ່ສຳລັບທຸລະກິດກ່ຽວກັບບໍ່ແຮ່

ຄະນະກຳມະການປິດບໍ່ແຮ່ສຳລັບທຸລະກິດກ່ຽວກັບບໍ່ແຮ່ ຖືກແຕ່ງຕັ້ງໂດຍລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ຊຶ່ງປະກອບດ້ວຍ:

1. ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ເປັນຫົວໜ້າຄະນະ;
2. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ທີ່ໂຄງການຕັ້ງຢູ່ ເປັນຮອງ;
3. ຫົວໜ້າກົມທີ່ກ່ຽວຂ້ອງຂອງກະຊວງພະລັງງານ ແລະ ບໍ່ແຮ່ ເປັນຮອງ;
4. ຫົວໜ້າກົມທີ່ກ່ຽວຂ້ອງຂອງກະຊວງແຜນການ ແລະ ການລົງທຶນ ເປັນກຳມະການ;
5. ຫົວໜ້າກົມທີ່ກ່ຽວຂ້ອງຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນກຳມະການ;
6. ຫົວໜ້າກົມທີ່ກ່ຽວຂ້ອງຂອງກະຊວງການເງິນ ເປັນກຳມະການ;
7. ຫົວໜ້າກົມທີ່ກ່ຽວຂ້ອງຂອງກະຊວງກະສິກຳ ແລະ ປ່າໄມ້ ເປັນກຳມະການ;
8. ຫົວໜ້າກົມທີ່ກ່ຽວຂ້ອງຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
9. ຫົວໜ້າກົມທີ່ກ່ຽວຂ້ອງຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນກຳມະການ;

10. ຫົວໜ້າກົມທີ່ກ່ຽວຂ້ອງຂອງກະຊວງສາທາລະນະສຸກ ເປັນກຳມະການ;
11. ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ທີ່ໂຄງການຕັ້ງຢູ່ ເປັນກຳມະການ;
12. ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ນະຄອນຫຼວງ ເປັນກຳມະການ;
13. ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງ ເປັນກຳມະການ;
14. ປະທານແນວລາວສ້າງຊາດເມືອງ ທີ່ໂຄງການຕັ້ງຢູ່ ເປັນກຳມະການ;
15. ຜູ້ຕາງໜ້າຂອງຜູ້ລົງທຶນ ເປັນກຳມະການ.

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປິດບໍ່ແຮ່ ສຳລັບທຸລະກິດກ່ຽວກັບບໍ່ແຮ່**

ຄະນະກຳມະການປິດບໍ່ແຮ່ ສຳລັບທຸລະກິດກ່ຽວກັບບໍ່ແຮ່ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ຄຸ້ມຄອງການວາງແຜນ ແລະ ການຈັດຕັ້ງປະຕິບັດແຜນການປິດບໍ່ແຮ່;
2. ແຕ່ງຕັ້ງໜ່ວຍງານຄຸ້ມຄອງການປິດບໍ່ແຮ່;
3. ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານປິດບໍ່ແຮ່;
4. ຄົ້ນຄວ້ານະໂຍບາຍ, ຫົວໜ່ວຍ ການທົດແທນຄ່າເສຍຫາຍ ແລະ ໄລຍະເວລາການຟື້ນຟູການປິດບໍ່ແຮ່ ເພື່ອສະເໜີກະຊວງພະລັງງານ ແລະ ບໍ່ແຮ່ ພິຈາລະນາ;
5. ພິຈາລະນາ ແລະ ແກ້ໄຂ ຂໍ້ສະເໜີທີ່ກ່ຽວຂ້ອງກັບວຽກງານປິດບໍ່ແຮ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນແຕ່ລະໄລຍະ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 40 ຄະນະກຳມະການປິດບໍ່ແຮ່ ສຳລັບທຸລະກິດກ່ຽວກັບແຮ່ທາດສະເພາະ**

ຄະນະກຳມະການປິດບໍ່ແຮ່ສຳລັບທຸລະກິດກ່ຽວກັບແຮ່ທາດສະເພາະ ຖືກແຕ່ງຕັ້ງໂດຍ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບ່ອນທີ່ໂຄງການຕັ້ງຢູ່ ຊຶ່ງປະກອບດ້ວຍ:

1. ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ທີ່ໂຄງການຕັ້ງຢູ່ ເປັນຫົວໜ້າຄະນະ;
2. ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ ເປັນຮອງ;
3. ຫົວໜ້າພະແນກແຜນການ ແລະ ການລົງທຶນ ແຂວງ, ນະຄອນຫຼວງ ເປັນຮອງ;
4. ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ທີ່ໂຄງການຕັ້ງຢູ່ ເປັນກຳມະການ;

5. ຜູ້ຕາງໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ, ນະຄອນຫຼວງ ເປັນກຳມະການ;
6. ຜູ້ຕາງໜ້າພະແນກການເງິນ ແຂວງ, ນະຄອນຫຼວງ ເປັນກຳມະການ;
7. ຜູ້ຕາງໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ເປັນກຳມະການ;
8. ຜູ້ຕາງໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ ເປັນກຳມະການ;
9. ຜູ້ຕາງໜ້າພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ເປັນກຳມະການ;
10. ຜູ້ຕາງໜ້າຜູ້ລົງທຶນ ເປັນກຳມະການ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປິດບໍ່ແຮ່ ສຳລັບທຸລະກິດກ່ຽວກັບແຮ່ທາດສະເພາະ**

ຄະນະກຳມະການປິດບໍ່ແຮ່ ສຳລັບທຸລະກິດກ່ຽວກັບແຮ່ທາດສະເພາະ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ, ຄຸ້ມຄອງການວາງແຜນ ແລະ ການຈັດຕັ້ງປະຕິບັດແຜນການປິດບໍ່ແຮ່;
2. ແຕ່ງຕັ້ງໜ່ວຍງານຄຸ້ມຄອງການປິດບໍ່ແຮ່;
3. ຕິດຕາມກວດກາ ການຈັດຕັ້ງປະຕິບັດວຽກງານປິດບໍ່ແຮ່;
4. ຄົ້ນຄວ້າຫືວໜ່ວຍ ການທົດແທນຄ່າເສຍຫາຍ ແລະ ສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ;
5. ພິຈາລະນາ ແລະ ແກ້ໄຂ ຂໍ້ສະເໜີທີ່ກ່ຽວຂ້ອງກັບວຽກງານປິດບໍ່ແຮ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
6. ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເປັນແຕ່ລະໄລຍະ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 7
## ສິດ ແລະ ພັນທະຂອງຜູ້ລົງທຶນ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ

**ມາດຕາ 42 ສິດຂອງຜູ້ລົງທຶນ**

ຜູ້ລົງທຶນ ມີສິດ ດັ່ງນີ້:

1. ສະເໜີຂໍອະນຸຍາດຖອນເງິນຄ້ຳປະກັນການປິດບໍ່ແຮ່ ຕໍ່ກະຊວງພະລັງງານ ແລະ ບໍ່ແຮ່ ພາຍຫຼັງສຳເລັດແຕ່ລະໜ້າວຽກຂອງການປິດບໍ່ແຮ່;
2. ເລືອກຮູບການວາງເງິນຄ້ຳປະກັນການປິດບໍ່ແຮ່;

3. ວ່າຈ້າງຜູ້ຊ່ຽວຊານເອກະລາດ ໂດຍເປັນເອກະພາບກັບ ຂະແໜງການພະລັງງານ ແລະ ບໍ່ແຮ່;
4. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43 ພັນທະຂອງຜູ້ລົງທຶນ**

ຜູ້ລົງທຶນ ມີພັນທະ ດັ່ງນີ້:

1. ສ້າງແຜນການປິດບໍ່ແຮ່ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ແຕ່ງຕັ້ງທີມງານການປິດບໍ່ແຮ່ ພ້ອມດ້ວຍຜູ້ທີ່ມີຄວາມຊຳນານງານ;
3. ວາງເງິນຄ້ຳປະກັນການປິດບໍ່ແຮ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ດຳລັດສະບັບນີ້;
4. ດຳເນີນການປິດບໍ່ແຮ່ ແລະ ຟື້ນຟູເນື້ອທີ່ຄືນ ຕາມແຜນການປິດບໍ່ແຮ່ ທີ່ຖືກຮັບຮອງ;
5. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ແກ່ຂະແໜງການພະລັງງານ ແລະ ບໍ່ແຮ່ ແລະ ຄະນະກຳມະການປິດບໍ່ແຮ່ ໃນການປະຕິບັດວຽກງານຕາມໜ້າທີ່;
6. ຮັບຜິດຊອບຕໍ່ ທຸກຄ່າໃຊ້ຈ່າຍກ່ຽວກັບການປິດບໍ່ແຮ່, ການຕິດຕາມພາຍຫຼັງການປິດບໍ່ແຮ່ ແລະ ພັນທະທາງດ້ານການເງິນຕໍ່ລັດ;
7. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານການປິດບໍ່ແຮ່ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ຢ່າງເປັນປົກກະຕິ;
8. ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 ສິດຂອງຊຸມຊົນທີ່ໄດ້ຮັບຜົນກະທົບ**

ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການຂຸດຄົ້ນບໍ່ແຮ່ ມີສິດ ດັ່ງນີ້:

1. ໄດ້ຮັບ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ ກ່ຽວກັບຜົນປະໂຫຍດ, ຜົນກະທົບຕໍ່ສິ່ງແວດລ້ອມຈາກ ການປິດບໍ່ແຮ່;
2. ເຂົ້າຮ່ວມເຈລະຈາ ແລະ ປຶກສາຫາລື ແຜນການປິດບໍ່ແຮ່;
3. ເຂົ້າຮ່ວມກວດກາພາກສະໜາມ ແລະ ກອງປະຊຸມປຶກສາຫາລືຂັ້ນຕ່າງໆ ເພື່ອປະກອບຄຳເຫັນຕໍ່ ຂະບວນການປິດບໍ່ແຮ່;
4. ເຂົ້າຮ່ວມການຕິດຕາມພາຍຫຼັງການປິດບໍ່ແຮ່;
5. ສະເໜີ ຕໍ່ຜູ້ລົງທຶນ ຫຼື ຮ້ອງທຸກ ຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃຫ້ດຳເນີນການແກ້ໄຂ ກ່ຽວ ກັບຜົນກະທົບຕໍ່ສິ່ງແວດລ້ອມ ຈາກການປິດບໍ່ແຮ່ ທີ່ເຫັນວ່າບໍ່ຖືກຕ້ອງ ແລະ ບໍ່ເປັນທຳ;
6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ມາດຕາ 45 ພັນທະຂອງຊຸມຊົນທີ່ໄດ້ຮັບຜົນກະທົບ

ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການຂຸດຄົ້ນບໍ່ແຮ່ ມີພັນທະ ດັ່ງນີ້:

1. ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນທີ່ກ່ຽວຂ້ອງກັບວຽກງານປິດບໍ່ແຮ່ ໃຫ້ແກ່ຂະແໜງການພະລັງງານ ແລະ ບໍ່ແຮ່ ແລະ ຜູ້ລົງທຶນ;
2. ລາຍງານຕາມຄວາມເປັນຈິງ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ທີ່ເກີດຈາກຂະບວນການປິດບໍ່ແຮ່ ຕໍ່ອົງການປົກຄອງທ້ອງຖິ່ນ, ຂະແໜງການພະລັງງານ ແລະ ບໍ່ແຮ່ ຫຼື ຄະນະກຳມະການປິດບໍ່ແຮ່ ເພື່ອດຳເນີນການແກ້ໄຂບັນຫາຜົນກະທົບທີ່ເກີດຈາກການປິດບໍ່ແຮ່;
3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຄຸ້ມຄອງ ແລະ ກວດກາວຽກງານປິດບໍ່ແຮ່

ມາດຕາ 46 ອົງການຄຸ້ມຄອງ ແລະ ກວດກາວຽກງານປິດບໍ່ແຮ່

ຂະແໜງການພະລັງງານ ແລະ ບໍ່ແຮ່ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ກວດກາວຽກງານປິດບໍ່ແຮ່.

ອົງການຄຸ້ມຄອງ ແລະ ກວດກາວຽກງານປິດບໍ່ແຮ່ ປະກອບດ້ວຍ:

1. ກະຊວງພະລັງງານ ແລະ ບໍ່ແຮ່;
2. ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ;
3. ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ, ນະຄອນ.

ມາດຕາ 47 ສິດ ແລະ ໜ້າທີ່ຂອງກະຊວງພະລັງງານ ແລະ ບໍ່ແຮ່

ໃນການຄຸ້ມຄອງວຽກງານການປິດບໍ່ແຮ່ ກະຊວງພະລັງງານ ແລະ ບໍ່ແຮ່ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສ້າງນະໂຍບາຍ, ນິຕິກຳ ກ່ຽວກັບ ວຽກງານການປິດບໍ່ແຮ່;
2. ໂຄສະນາເຜີຍແຜ່, ຊີ້ນຳ, ຕິດຕາມການຈັດຕັ້ງປະຕິບັດນິຕິກຳ ກ່ຽວກັບ ວຽກງານປິດບໍ່ແຮ່;
3. ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານປິດບໍ່ແຮ່ ໃນຂອບເຂດທົ່ວປະເທດ;
4. ພິຈາລະນາຮັບຮອງແຜນການປິດບໍ່ແຮ່;
5. ປະເມີນການປິດບໍ່ແຮ່ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
6. ແຕ່ງຕັ້ງຄະນະກຳມະການປິດບໍ່ແຮ່ສຳລັບທຸລະກິດກ່ຽວກັບບໍ່ແຮ່;
7. ອອກໃບຢັ້ງຢືນການປິດບໍ່ແຮ່ ແລະ ການສົ່ງມອບເນື້ອທີ່ສຳປະທານຄືນ;
8. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີກ່ຽວກັບການປິດບໍ່ແຮ່;

9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານປິດບໍ່ແຮ່ ໃຫ້ລັດຖະບານຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 ສິດ ແລະ ໜ້າທີ່ຂອງພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານປິດບໍ່ແຮ່ ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ນິຕິກຳ ກ່ຽວກັບ ວຽກງານປິດບໍ່ແຮ່;
2. ໂຄສະນາເຜີຍແຜ່, ຊີ້ນຳ, ຕິດຕາມການຈັດຕັ້ງປະຕິບັດນິຕິກຳ ກ່ຽວກັບ ວຽກງານປິດບໍ່ແຮ່;
3. ສັງລວມ, ສະໜອງຂໍ້ມູນ ຂ່າວສານ ແລະ ສະຖິຕິ ກ່ຽວກັບ ວຽກງານປິດບໍ່ແຮ່;
4. ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານປິດບໍ່ແຮ່;
5. ພິຈາລະນາຮັບຮອງເອົາແຜນການປິດບໍ່ແຮ່;
6. ປະເມີນການປິດບໍ່ແຮ່ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
7. ອອກໃບຢັ້ງຢືນການປິດບໍ່ແຮ່ ແລະ ການສົ່ງມອບເນື້ອທີ່ສຳປະທານຄືນ;
8. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີກ່ຽວກັບການປິດບໍ່ແຮ່;
9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານປິດບໍ່ແຮ່ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່, ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 ສິດ ແລະ ໜ້າທີ່ຂອງ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານປິດບໍ່ແຮ່ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາເຜີຍແຜ່ນິຕິກຳ ກ່ຽວກັບ ວຽກງານປິດບໍ່ແຮ່;
2. ຕິດຕາມການຈັດຕັ້ງປະຕິບັດວຽກງານປິດບໍ່ແຮ່;
3. ສະໜອງຂໍ້ມູນກ່ຽວກັບວຽກງານປິດບໍ່ແຮ່;
4. ຮັບ ແລະ ລາຍງານຄຳສະເໜີກ່ຽວກັບການປິດບໍ່ແຮ່;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 50 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານປິດບໍ່ແຮ່ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບຂະແໜງການພະລັງງານ ແລະ ບໍ່ແຮ່ ຕາມພາລະ ບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 51 ເນື້ອໃນການກວດກາ**

ການກວດກາວຽກງານປິດບໍ່ແຮ່ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານປິດບໍ່ແຮ່;
2. ການປະຕິບັດຂັ້ນຕອນຂອງການດໍາເນີນການປິດບໍ່ແຮ່;
3. ການເຄື່ອນໄຫວຂອງການຈັດຕັ້ງ, ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງກັບວຽກງານປິດບໍ່ແຮ່.

**ມາດຕາ 52 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາຕາມແຜນການປະຈໍາ ແລະ ມີກໍານົດເວລາອັນ ແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມ ຈໍາເປັນ ໂດຍແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາ ຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກ ກວດກາ ຊາບລ່ວງໜ້າ.

ການກວດກາໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 53 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດໍາລັດສະບັບນີ້ ເປັນຕົ້ນ ການດໍາເນີນການປິດບໍ່ແຮ່ຕາມແຜນການ, ການປັວແປງ ແລະ ຟື້ນຟູສະພາບແວດລ້ອມໃຫ້ດີຂຶ້ນ ຈະໄດ້ຮັບການ ຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 54 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດ ດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ໝວດທີ 10

## ບົດບັນຍັດສຸດທ້າຍ

**ມາດຕາ 55 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 56 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫຼັງໄດ້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ສຳລັບໂຄງການຂຸດຄົ້ນບໍ່ແຮ່ທີ່ໄດ້ຮັບອະນຸຍາດ ກ່ອນດຳລັດສະບັບນີ້ມີຜົນສັກສິດ ໃຫ້ປະຕິບັດການປິດບໍ່ແຮ່ ຫຼື ປັບປຸງໃຫ້ສອດຄ່ອງກັບດຳລັດສະບັບນີ້ ພາຍໃນ ໜຶ່ງ ປີ ນັບແຕ່ວັນດຳລັດສະບັບນີ້ມີຜົນສັກສິດ.

**ຕາງໜ້າ ລັດຖະບານແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ